**ບົດອອກຂ່າວ**

**ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ**

**7 ມິຖຸນາ 2017, ເວລາ 9:00 ໂມງ, ທີ່ ຫ້ອງປະຊຸມຊັ້ນ 6 ກະຊວງ ແຜນການ ແລະການລົງທຶນ**

---

ໃນຕອນເຊົ້າຂອງວັນພຸດ, ວັນທີ 7 ມິຖຸນາ 2017, ກອງປະຊຸມຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນໄດ້ຖືກຈັດຂຶ້ນ ທີ່ ກະຊວງແຜນການ ແລະການລົງທຶນ ໂດຍການເປັນປະທານຂອງ ທ່ານ ດຣ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ໃນນາມຮອງປະທານ ທັງເປັນຜູ້ປະຈຳການຄະນະຊີ້ນຳລະດັບຊາດເພື່ອຂະບວນການໂຕະມົນ ແລະ ໄດ້ມີຜູ້ເຂົ້າຮ່ວມລະດັບລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ຜູ້ຕາງໜ້າຈາກກະຊວງ, ຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມທັງໝົດ 60 ທ່ານ.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອຮັບຟັງການລາຍງານຂອງກອງເລຂາຂະບວນການໂຕະມົນ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະຈຳປີ 2016 ທີ່ໄດ້ຈັດຂຶ້ນໃນທ້າຍປີ 2016 ຜ່ານມາ. ພ້ອມກັນນີ້, ກໍ່ໄດ້ປຶກສາຫາລື ແລະຄົ້ນຄວ້າກຳນົດທິດທາງກ່ຽວກັບວຽກງານຈຸດສຸມຂອງຂະບວນການໂຕະມົນ ໂດຍສະເພາະແຜນວຽກຂອງຂະບວນການໂຕະມົນປະຈຳປີ 2017.



ທ່ານ ດຣ. ສຸພັນ ແກ້ວມີໄຊ, ລັດຖະມົນຕີ ກະຊວງແຜນການ ແລະການລົງທຶນ ໄດ້ກ່າວໃນບົດກ່າວເປີດບາງຕອນວ່າ: "ຂະບວນການໂຕະມົນ ແມ່ນກົນໄກລະດັບຊາດທີ່ສຳຄັນ ໃນການເພີ່ມທະວີປະສິດທິຜົນຂອງການຮ່ວມມືເພື່ອການພັດທະນາ ເຊິ່ງຂະບວນການດັ່ງກ່າວ ນອກຈາກຈະເປັນການລະດົມທຶນຮອນເພື່ອມາສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-

ສັງຄົມແຫ່ງຊາດ ໃນແຕ່ລະໄລຍະແລ້ວ, ຍັງແມ່ນເວທີໃນການສ້າງຄວາມເຂົ້າອົກເຂົ້າໃຈລະ ຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາ ກ່ຽວກັບ ຍຸດທະສາດ ແລະນະໂຍບາຍຕ່າງໆ ທີ່ຕິດພັນກັບວຽກງານການພັດທະນາ ໃນ ສປປ ລາວ.

ທີ່ ແຂວງ ວຽງຈັນ, ວັນທີ 24-25 ພະຈິກ 2016 ທີ່ຜ່ານມາ ພວກເຮົາໄດ້ຈັດກອງປະຊຸມໂຕະມົນປະຈໍາປີ 2016 ຂຶ້ນ; ພາຍໃຕ້ຫົວຂໍ້: "ເລັ່ງລັດຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ **VIII** (2016-2020) ເພື່ອນໍາພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ແລະບັນລຸເປົ້າໝາຍການພັດທະນາແບບຍືນຍົງ". ພວກເຮົາຮ່ວມກັບຄູ່ຮ່ວມພັດທະນາ. ຄັດເລືອກເອົາ 4 ປະເດັນຫຼັກ ຂອງທັງຫມົດ 14 ປະເດັນ ທີ່ໄດ້ປຶກສາຫາລືກັນໃນ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 12 ໃນປີ 2015 ເຊິ່ງປະກອບມີ: 1) ການເຊື່ອມສານ ແລະ ຈັດຕັ້ງປະຕິບັດ ວາລະການພັດທະນາແບບຍືນຍົງ ຮອດປີ 2030 ລວມທັງເປົ້າໝາຍການພັດທະນາແບບຍືນຍົງ; 2) ການເຕີບໂຕສີຂຽວ, ການປ່ຽນແປງດິນຟ້າອາກາດ ແລະ ການກຽມຄວາມພ້ອມຮັບມືກັບໄພພິບັດທໍາມະຊາດ; 3) ການຄໍ້າປະກັນສະບຽງອາຫານ ແລະໂພຊະນາການ; 4) ການເປັນຄູ່ຮ່ວມ ເພື່ອການພັດທະນາ ທີ່ມີປະສິດທິຜົນ.

'ພາຍຫລັງກອງປະຊຸມດັ່ງກ່າວ, ກະຊວງ ແຜນການ ແລະການລົງທຶນ, ໃນນາມກອງເລຂາຂອງຂະບວນການໂຕະມົນ ໄດ້ສັງລວມຜົນຂອງການປຶກສາຫາລື ແລະສົນທະນາ ແລະລາຍງານຕໍ່ລັດຖະບານ ກໍ່ຄືຫ້ອງການສໍານັກງານນາຍົກລັດຖະມົນຕີ, ແລະກໍ່ມີແຈ້ງການ ສະບັບເລກທີ່ 149/ຫສນຍ.ກລຂ, ລົງວັນທີ່ 27 ມັງກອນ 2017 ກ່ຽວກັບທິດຜັນຂະຫຍາຍຜົນກອງປະຊຸມໂຕະມົນ ປະຈໍາປີ 2016 ດັ່ງກ່າວ.

ທີ່ກອງປະຊຸມຄັ້ງນີ້ຍັງໄດ້ມີການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນ ປະຈໍາປີ 2016 ແລະ ການກະກຽມກອງປະຊຸມປະໂຕະມົນປະຈໍາປີ 2017 ໂດຍ: ທ່ານ ນາງ ສີສົມບູນ ອຸນາວົງ, ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະການລົງທຶນ ໂດຍອີງໃສ່ແຈ້ງການຫ້ອງການສໍານັກງານນາຍົກລັດຖະມົນຕີສະບັບເລກທີ່ 149/ຫສນຍ.ກລຂ, ລົງວັນທີ 27 ມັງກອນ 2017, ເຊິ່ງໄດ້ຮັບຄວາມສົນໃຈຈາກຜູ້ເຂົ້າຮ່ວມຂອງກອງປະຊຸມຢ່າງຫຼວງຫຼາຍ.

ກອງປະຊຸມໄດ້ດໍາເນີນໄປເປັນເວລາເຄິ່ງມື້ດ້ວຍບັນຍາກາດທີ່ສ້າງສັນ, ມີການປະກອບຄໍາເຫັນຢ່າງກົງໄປກົງມາ ແລະ ໄດ້ປິດລົງຢ່າງຈົບງາມ.


**ຕິດຕໍ່ຂໍ້ມູນ:**

| | |
|---|---|
| ທ່ານ ມໍລະກົດ ວົງໄຊ<br>ຫົວໜ້າພະແນກສະຫະປະຊາຊາດ<br>ກົມຮ່ວມມືສາກົນ, ກະຊວງ ຜທ<br>ໂທ: 020-2244 8892<br>ອີເມວ: k_vongxay@hotmail.com | ນ. ວີນາ ໂງ່ນວໍຣະຣາດ,<br>ພະນັກງານອາວຸໂສດ້ານການສື່ສານ ແລະ ການສະໜັບສະໜູນທາງວິຊາການໃຫ້ແກ່ການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VIII,<br>ໜ່ວຍງານ PSU,<br>ໂທ: 020-7786 3939<br>ອີເມວ: venang@gmail.com |